ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄໍາໄຊ

ເລກທີ: 475/ຂບຊ.
ບໍລິຄໍາໄຊ, ວັນທີ: 13 ສິງຫາ 2020

# ຂໍ້ຕົກລົງ
# ຂອງ ເຈົ້າແຂວງບໍລິຄໍາໄຊ
# ວ່າດ້ວຍ ການຄຸ້ມຄອງ, ປົກປັກຮັກສາຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ ໃນເຂດອ່າງຮັບນໍ້າ ໜ້າເຂື່ອນໄຟຟ້າ ນໍ້າງຽບ 1 ໃນເຂດພື້ນທີ່ ແຂວງບໍລິຄໍາໄຊ

- ອີງຕາມ ກົດໝາຍ ວ່າດ້ວຍການສ້າງນິຕິກໍາ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;
- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ(ສະບັບປັບປຸງໃໝ່) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້(ສະບັບປັບປຸງໃໝ່) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍສັດນໍ້າ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ດໍາລັດ ວ່າດ້ວຍປ່າປ້ອງກັນ ສະບັບເລກທີ 333/ນຍ, ລົງວັນທີ 19 ກໍລະກົດ 2010;
- ອີງຕາມ ມະຕິກອງປະຊຸມໃຫຍ່ສະໄໝສາມັນເທື່ອທີ 9 ຂອງ ສະພາປະຊາຊົນ ແຂວງບໍລິຄໍາໄຊ ຊຸດທີ I. ສະບັບເລກທີ 35/ສພຂ.ບຊ, ລົງວັນທີ 3 ສິງຫາ 2020.

## ເຈົ້າແຂວງບໍລິຄໍາໄຊ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງ ສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ເພື່ອຄຸ້ມຄອງ, ປົກປັກຮັກສາຊັບພະຍາກອນປ່າໄມ້, ດິນປ່າໄມ້, ປ່າຍອດນໍ້າ, ຊີວະນາໆພັນ ແລະ ແຫຼ່ງນໍ້າ ໃນຂອບເຂດພື້ນທີ່ອ່າງຮັບນໍ້າ ໜ້າເຂື່ອນໄຟຟ້ານໍ້າງຽບ 1, ແນໃສ່ການມີສ່ວນຮ່ວມ ຂອງປະຊາຊົນ ໃນການປະຕິບັດແຜນຄຸ້ມຄອງ, ຮັກສາປະລິມານນໍ້າ, ຄຸນນະພາບຂອງດິນ, ປ້ອງກັນການເຊາະເຈື່ອນຂອງດິນ ໃຫ້ມີຄວາມຍືນຍົງ. ປະກອບສ່ວນໃນການພັດທະນາເສດຖະກິດສັງຄົມ ຂອງແຂວງບໍລິຄໍາໄຊ ໃນແຕ່ລະໄລຍະ.

ມາດຕາ 2. ການຄຸ້ມຄອງ

ການຄຸ້ມຄອງ, ປົກປັກຮັກສາ ຊັບພະຍາກອນປ່າໄມ້ ແລະ ຊີວະນາງພັນ ໃນເຂດອ່າງຮັບນ້ຳໜ້າເຂື່ອນໄຟຟ້າ ແມ່ນ ການກຳນົດຫຼັກການ ແລະ ວິທີການອັນລະອຽດ ເພື່ອຄຸ້ມຄອງ, ປົກປັກຮັກສາ ພັດທະນາຊັບພະຍາກອນປ່າໄມ້ ແລະ ຊີວະນາງພັນ, ຊຶ່ງເຂດດັ່ງກ່າວ ນອນຢູ່ໃນເຂດ ພື້ນທີ່ ປ່າປ້ອງກັນແຫ່ງຊາດ ນ້ຳງຽບ-ນ້ຳມັງ.

**ມາດຕາ 3. ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ ໃນຂໍ້ຕົກລົງ ສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຊັບພະຍາກອນປ່າໄມ້** ໝາຍເຖິງ ຊັບພະຍາກອນຕ່າງໆ ທີ່ມີຊີວິດ ແລະ ບໍ່ມີຊີວິດ ຊຶ່ງປະກອບດ້ວຍ ດິນ, ນ້ຳ ພືດພັນ, ຕົ້ນໄມ້, ສັດນ້ຳ, ສັດປ່າ ແລະ ອື່ນໆ ທີ່ມີຢູ່ໃນເຂດທີ່ດິນປ່າໄມ້;
2. **ຊີວະນາງພັນ** ໝາຍເຖິງ ຄວາມຫຼາກຫຼາຍ ຂອງລະບົບນິເວດ, ຊະນິດ ແລະ ແນວພັນ ຂອງສິ່ງທີ່ມີຊີວິດ ເຊັ່ນ ພືດ, ສັດ, ແມງໄມ້ ແລະ ຈຸລິນຊີ ຢູ່ໃນຂອບເຂດທຳມະຊາດໃດໜຶ່ງ;
3. **ອ່າງຮັບນ້ຳ** ໝາຍເຖິງ ຂອບເຂດເນື້ອທີ່ປ່າໄມ້ ແລະ ເນື້ອທີ່ດິນທຸກຕອນ, ສາຍນ້ຳສາຂາຕ່າງໆ ຕັ້ງແຕ່ບ່ອນທີ່ມີສັນປັນນ້ຳ ແລະ ບ່ອນທີ່ເມັດຝົນຕົກລົງມາໄຫຼໂຮມເຂົ້າກັນເປັນລະບົບແຫຼ່ງນ້ຳໄຫຼເຂົ້າອ່າງເກັບນ້ຳ ຂອງ ເຂື່ອນ ໄຟຟ້ານ້ຳງຽບ 1;
4. **ສັດນ້ຳ** ໝາຍເຖິງ ສັດທຸກຊະນິດ ທີ່ເກີດ ແລະ ຂະຫຍາຍຕົວ ຢູ່ໃນນ້ຳທຳມະຊາດ ຫຼື ຖືກນຳເອົາ ຈາກ ທຳມະຊາດ ມາລ້ຽງ;
5. **ສັດປ່າ** ໝາຍເຖິງ ສັດທຸກຊະນິດ ທີ່ເກີດ ແລະ ຂະຫຍາຍຕົວ ຢູ່ໃນປ່າທຳມະຊາດ ຫຼືຖືກນຳເອົາ ຈາກ ທຳມະຊາດ ມາລ້ຽງ;
6. **ດິນປ່າໄມ້** ໝາຍເຖິງ ເນື້ອທີ່ດິນທຸກຕອນ ທີ່ມີປ່າໄມ້ ຫຼື ບໍ່ມີປ່າໄມ້ປົກຄຸມຢູ່ ຊຶ່ງລັດ ໄດ້ກຳນົດໃຫ້ເປັນທີ່ດິນປ່າໄມ້;
7. **ປ່າແຄມນ້ຳ** ໝາຍເຖິງ ປ່າໄມ້ທີ່ກຳນົດໄວ້ຕາມແຄມນ້ຳ, ຫ້ວຍ, ຮ່ອງ, ໜອງ, ບຶງ ຊຶ່ງມີລັກສະນະສະເພາະທາງດ້ານລະບົບນິເວດ ຂອງປ່າໄມ້, ປ້ອງກັນການສະລ້າງ, ການກັດເຊາະດິນແຄມນ້ຳ, ຫຼຸດຜ່ອນການໄຫຼຢ່າຂອງນ້ຳ ແລະ ການຕົກຕະກອນລົງໃສ່ແມ່ນ້ຳ, ອ່າງເກັບນ້ຳ ຊຶ່ງນັບແຕ່ແຄມນ້ຳ (ລະດັບນ້ຳສູງສຸດ) ອອກໄປເບື້ອງລະ 50 ແມັດ (ຫ້າສິບແມັດ) ຂຶ້ນໄປ ແຕ່ຕ້ອງໄດ້ສຳຫລວດ ແລະ ປັກຫລັກໝາຍໄວ້;
8. **ການຄຸ້ມຄອງປ່າໄມ້** ໝາຍເຖິງ ການດຳເນີນກິດຈະການ ກ່ຽວກັບປ່າໄມ້ ເຊັ່ນ: ການສຳຫຼວດ, ການວາງແຜນຈັດສັນ, ການຄົ້ນຄວ້າທົດລອງ, ການນຳໃຊ້ຜະລິດຕະພັນ ຈາກປ່າໄມ້, ແຫຼ່ງນ້ຳ ຕາມແຜນຈັດສັນ;
9. **ການປົກປັກຮັກສາປ່າໄມ້** ໝາຍເຖິງ ການດຳເນີນກິດຈະການຕ່າງໆ ເພື່ອການຮັກສາແຫຼ່ງນ້ຳ, ການປ້ອງກັນການເຊາະເຈື່ອນ ແລະ ຄຸນນະພາບຂອງດິນ, ປ້ອງກັນໄພທຳມະຊາດ, ສິ່ງແວດລ້ອມ ແລະ ອື່ນໆ;
10. **ການພັດທະນາປ່າໄມ້** ໝາຍເຖິງ ການປູກ, ການຟື້ນຟູປ່າໄມ້ ແລະ ເນື້ອທີ່ດິນປ່າໄມ້ຊຸດໂຊມ, ການປັບແປງເນື້ອທີ່ດິນຄືນ ພາຍຫຼັງການຂຸດຄົ້ນແຮ່ທາດ ໃນເຂດອ່າງຮັບນ້ຳໜ້າເຂື່ອນ ໃຫ້ກາຍເປັນປ່າທີ່ອຸດົມສົມບູນ;
11. **ການວາງແຜນນຳໃຊ້ທີ່ດິນ ແບບມີສ່ວນຮ່ວມ** ໝາຍເຖິງ ຂັ້ນຕອນການຈັດສັນເນື້ອທີ່ດິນ ສຳລັບການນຳໃຊ້ເນື້ອທີ່ດິນ ທີ່ແຕກຕ່າງກັນເປັນແຕ່ລະປະເພດ ໂດຍການ ປະສານສົມທົບ ລະຫວ່າງ ການຈັດຕັ້ງ ຂອງລັດ ທີ່

ກ່ຽວຂ້ອງ ຮ່ວມກັບ ອົງການປົກຄອງບ້ານ, ປະຊາຊົນ ເປັນຕົ້ນແມ່ນການກຳນົດຂອບເຂດແດນບ້ານ, ການກຳນົດພື້ນທີ່ດິນ ເພື່ອການຄຸ້ມຄອງ ແລະ ນຳໃຊ້;

12. **ເຂດຫວງຫ້າມເດັດຂາດ** ໝາຍເຖິງ ເນື້ອທີ່ດິນ ແລະ ປ່າໄມ້ໃນຂອບເຂດອ່າງຮັບນ້ຳໜ້າເຂື່ອນໄຟຟ້າ ທີ່ໄດ້ຈັດສັນ, ແບ່ງຂອບເຂດສະເພາະ, ເຂດຕົ້ນກຳເນີດຂອງແຫຼ່ງນ້ຳ ເພື່ອບໍ່ໃຫ້ສູນເສຍພັນພືດ, ພັນສັດນ້ຳ, ພັນສັດປ່າ;
13. **ເຂດຄຸ້ມຄອງນຳໃຊ້** ໝາຍເຖິງ ເຂດປ່າໄມ້ ເນື້ອທີ່ດິນປ່າໄມ້ ໃນພື້ນທີ່ອ່າງຮັບນ້ຳໜ້າເຂື່ອນໄຟຟ້າ ຊຶ່ງໄດ້ຈັດແບ່ງ ແລະ ກຳນົດໄວ້ ໃຫ້ປະຊາຊົນ ທີ່ອາໃສຢູ່ໃກ້ຄຽງໄດ້ນຳໃຊ້ປ່າໄມ້ ແລະ ຜະລິດຕະພັນປ່າໄມ້ ແບບຍືນຍົງຕາມປະເພນີ ໂດຍບໍ່ໃຫ້ມີຜົນກະທົບຕໍ່ ໂຄງສ້າງທຳມະຊາດຂອງປ່າໄມ້ ໃນຂອບເຂດທີ່ຈັດສັນໃຫ້ເທົ່ານັ້ນ;
14. **ສັດນ້ຳ-ສັດປ່າ ທຳມະຊາດ ປະເພດຫວງຫ້າມ** ໝາຍເຖິງ ສັດນ້ຳ ແລະ ສັດປ່າ ທີ່ໄດ້ ກຳນົດໄວ້ ໃນບັນຊີ **(I)** ຊຶ່ງເປັນສັດປ່າທີ່ຫາຍາກ, ໃກ້ຈະສູນພັນ;
15. **ສັດນ້ຳ-ສັດປ່າ ທຳມະຊາດ ປະເພດຄຸ້ມຄອງ** ໝາຍເຖິງ ສັດນ້ຳ ແລະ ສັດປ່າ ທີ່ໄດ້ກຳນົດໄວ້ ໃນບັນຊີ **(II)** ຊຶ່ງຈຳເປັນຕ້ອງມີການຄຸ້ມຄອງ;
16. **ສັດນ້ຳ-ສັດປ່າ ປະເພດທົ່ວໄປ** ໝາຍເຖິງ ສັດນ້ຳ ແລະ ສັດປ່າ ທີ່ໄດ້ ກຳນົດໄວ້ ໃນບັນຊີ **(III)** ຊຶ່ງບໍ່ໄດ້ຈັດເຂົ້າໃນສັດນ້ຳ ແລະ ສັດປ່າ ປະເພດຫວງຫ້າມ ແລະ ປະເພດຄຸ້ມຄອງ;
17. **ການປົກປັກຮັກສາ ສັດນ້ຳ ແລະ ສັດປ່າ** ໝາຍເຖິງ ການປ້ອງກັນ ສັດນ້ຳ ແລະ ສັດປ່າ ຢ່າງເຂັ້ມງວດ ເພື່ອບໍ່ໃຫ້ຖືກທຳລາຍ ແລະ ສູນຫາຍໄປ ຈາກທຳມະຊາດ;
18. **ເຄື່ອງປ່າຂອງດົງ** ໝາຍເຖິງ ພືດທີ່ເກີດຂຶ້ນຢູ່ຕາມທຳມະຊາດ ຫຼື ປູກຂຶ້ນ ຊຶ່ງລວມມີປະເພດ ຕົ້ນ, ລຳ, ເຄືອ, ຫົວ, ຮາກ, ຍອດ, ໜໍ່, ໃບ, ດອກ, ໝາກ, ເມັດ, ແກ່ນ, ເປືອກ, ນ້ຳມັນ, ຢາງ, ເຫັດ, ນ້ຳເຜີ້ງ ລວມທັງພືດເປັນຢາ ແລະ ອື່ນໆ;
19. **ການທຳລາຍປ່າໄມ້ ແລະ ເນື້ອທີ່ດິນປ່າໄມ້** ໝາຍເຖິງ ການຕັດ, ການຖາງ, ການຈູດ, ການເຮັດໃຫ້ຕົ້ນໄມ້ຕາຍໃນທຸກຮູບແບບ ແລະ ການຂຸດ, ເຈາະ ເຮັດໃຫ້ດິນເຊື່ອມຄຸນະພາບ ດ້ວຍການນຳໃຊ້ສານເຄມີ, ການນຳເອົາສັດເຂົ້າໄປລ້ຽງ ຫຼື ວິທີການອື່ນ ຊຶ່ງສ້າງຄວາມເສຍຫາຍແກ່ປ່າໄມ້ ແລະ ເນື້ອທີ່ດິນປ່າໄມ້;
20. **ການບຸກລຸກປ່າໄມ້ ແລະ ເນື້ອທີ່ດິນປ່າໄມ້** ໝາຍເຖິງ ການທັບປ່ຽນ, ການບຸກຍຶດ, ການຈັບຈອງ, ການນຳໃຊ້ ແລະ ການກະທຳອື່ນໆ ຕໍ່ປ່າໄມ້ ແລະ ເນື້ອທີ່ດິນປ່າໄມ້ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
21. **ເຄື່ອງມືລ່າສັດນ້ຳ ແລະ ສັດປ່າ ທີ່ມີລັກສະນະກັບສູນ** ໝາຍເຖິງ ເຄື່ອງມືອຸປະກອນຕ່າງໆ ເປັນຕົ້ນແມ່ນ ປືນລ່າເນື້ອທຸກຊະນິດ, ລະເບີດ, ທາດລະເບີດ, ທາດເບື່ອ ຫຼື ສານເຄມີ, ໜໍ່ຊ໊ອດ, ໜໍ່ດູດ, ແຮ້ວທຸກປະເພດ, ກັບດັກ, ຫ່າວປືນ, ຫ່າວແຫຼມ ແລະ ອື່ນໆ;
22. **ການມີສ່ວນຮ່ວມ ຂອງປະຊາຊົນ** ໝາຍເຖິງ ການຮ່ວມໃນການອອກຄຳຄິດເຫັນ, ຮ່ວມໃນການວາງແຜນ, ຮ່ວມໃນການຈັດຕັ້ງປະຕິບັດ, ຮ່ວມໃນການກວດກາປະເມີນຜົນ ແລະ ໄດ້ຮັບຜົນປະໂຫຍດຮ່ວມກັນ ຈາກການຄຸ້ມຄອງຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ ໃນເຂດອ່າງຮັບນ້ຳໜ້າເຂື່ອນໄຟຟ້າ.

**ມາດຕາ 4. ນະໂຍບາຍ ຂອງລັດ**

ລັດ ຊຸກຍູ້ສົ່ງເສີມການມີສ່ວນຮ່ວມ ຂອງບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ຂອງລັດ ແລະ ເອກະຊົນ ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ, ສະໜັບສະໜູນ ພັດທະນາແກ້ໄຂຊີວິດການເປັນຢູ່ ຂອງປະຊາຊົນ ໃຫ້

ກໍຂຶ້ນ ເພື່ອໃຫ້ປະຊາຊົນ ມີສ່ວນຮ່ວມໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາຊັບພະຍາກອນປ່າໄມ້, ຊີວະນາໆພັນ, ສິ່ງແວດລ້ອມ ໃນຂອບເຂດອ່າງຮັບນ້ຳໜ້າເຂື່ອນໄຟຟ້າ ໃຫ້ມີຄວາມອຸດົມສົມບູນ ແລະ ມີຄວາມຍືນຍົງ.

**ມາດຕາ 5. ຫຼັກການພື້ນຖານກ່ຽວກັບການຄຸ້ມຄອງ**

ການຄຸ້ມຄອງ, ປົກປັກຮັກສາ ຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ ໃນອ່າງຮັບນ້ຳໜ້າເຂື່ອນໄຟຟ້າ ຕ້ອງປະຕິບັດຕາມຫຼັກການຕົ້ນຕໍ ດັ່ງນີ້:

1. ຮັບປະກັນໃຫ້ສອດຄ່ອງກັບ ແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ວິໄສທັດ, ຍຸດທະສາດ ແລະ ແຜນພັດທະນາເສດຖະກິດສັງຄົມ;
2. ຮັບປະກັນຜົນປະໂຫຍດ ຂອງ ລັດ, ປະຊາຊົນ ການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຢ່າງກ້ວາງຂວາງ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ປົກປັກຮັກສາຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ ໃນເຂດພື້ນທີ່ອ່າງຮັບນ້ຳ;
3. ຮັບປະກັນການຄຸ້ມຄອງ, ປົກປັກຮັກສາຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ ຢ່າງລວມສູນ, ໂປ່ງໃສ, ເປີດເຜີຍ, ສາມາດກວດສອບໄດ້.

**ມາດຕາ 6. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ຂອງລັດ ແລະ ເອກະຊົນ, ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຂົ້າໄປເຄື່ອນໄຫວໃນເຂດອ່າງຮັບນ້ຳໜ້າເຂື່ອນໄຟຟ້ານ້ຳງຽບ 1 ໃນເຂດພື້ນທີ່ແຂວງບໍລິຄຳໄຊ ຕ້ອງໄດ້ປະຕິບັດຕາມ ຂໍ້ຕົກລົງສະບັບນີ້.

## ໝວດທີ 2
## ພັນທະ ແລະ ການມີສ່ວນຮ່ວມໃນການຄຸ້ມຄອງ, ປົກປັກຮັກສາ

**ມາດຕາ 7. ພັນທະໃນການຄຸ້ມຄອງ, ປົກປັກຮັກສາ**

ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ຂອງລັດ ແລະ ເອກະຊົນ ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ລ້ວນແຕ່ມີພັນທະໃນການຄຸ້ມຄອງຊັບພະຍາກອນປ່າໄມ້, ເນື້ອທີ່ດິນປ່າໄມ້, ແຫຼ່ງນ້ຳ, ສັດນ້ຳ - ສັດປ່າ ໃນເຂດພື້ນທີ່ອ່າງຮັບນ້ຳ ໜ້າເຂື່ອນໄຟຟ້າ ນ້ຳງຽບ 1.

**ມາດຕາ 8. ການມີສ່ວນຮ່ວມໃນການຄຸ້ມຄອງ, ປົກປັກຮັກສາ**

ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ຂອງລັດ ແລະ ເອກະຊົນ ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ລ້ວນແຕ່ມີສ່ວນຮ່ວມໃນການຄຸ້ມຄອງ, ປົກປັກຮັກສາ, ຟື້ນຟູປ່າ, ສະກັດກັ້ນໄຟໄໝ້ລາມປ່າ, ປ້ອງກັນການເຊາະເຈື່ອນ ຂອງດິນ ແລະ ອື່ນໆ...

# ໝວດທີ 3

# ຂອບເຂດເນື້ອທີ່ ແລະ ການຈັດແບ່ງເຂດຄຸ້ມຄອງອ່າງຮັບນ້ຳ

**ມາດຕາ 9. ຂອບເຂດເນື້ອທີ່ອ່າງຮັບນ້ຳ**

ອ່າງຮັບນ້ຳໜ້າເຂື່ອນໄຟຟ້າ ນ້ຳງຽບ 1 (ຕໍ່ໄປເອີ້ນວ່າ: ອ່າງຮັບນ້ຳໜ້າເຂື່ອນໄຟຟ້າ) ໃນເຂດພື້ນທີ່ ແຂວງບໍລິຄຳໄຊ. ມີເນື້ອທີ່ທັງໝົດ 14.032 ເຮັກຕາ; ກວມເອົາເຂດພື້ນທີ່ ບ້ານຜາໃດ, ບ້ານໂພນສີງ, ບ້ານໂພນແຍງ, ບ້ານບໍ່, ບ້ານນາຫັນ, ບ້ານທ່າເຮືອ, ບ້ານຫາດຢື້ນ ແລະ ບ້ານພູໂຮມໄຊ ຂອງເມືອງບໍລິຄັນ ແລະ ມີຂອບເຂດຕິດກັບ ດັ່ງນີ້:

- ທິດເໜືອ ຕິດກັບ ບ້ານໂພນສີງ ແລະ ບ້ານຜາໃດ ເລີ່ມແຕ່ ສັນພູຜານ້ອຍ ເຂດເຊື່ອມຕໍ່ ລະຫວ່າງ ບ້ານໂພນສີງ ແລະ ບ້ານໂພນແຍງ ລັດລົງໃສ່ສາຍນ້ຳງຽບ ເລາະຕາມສາຍນ້ຳງຽບ ຂຶ້ນໄປ ຮອດປາກຫ້ວຍຣິກ ຂຶ້ນຕາມຫ້ວຍຣິກ ຮອດປາກນ້ຳລານ ລັດໃສ່ເຂດເຊື່ອມຕໍ່ ບ້ານແດນມີໄຊ ແຂວງໄຊສົມບູນ, ເລາະຕາມທາງໄປບ້ານແດນມີໄຊ ຮອດເຂດເຊື່ອມຕໍ່ ຂອງ ບ້ານຜາໃດ ເມືອງບໍລິຄັນ ລັດຂຶ້ນໃສ່ສັນພູໝື່ນ ເລາະຕາມສັນພູໝື່ນ ລົງໃສ່ຍອດຫ້ວຍໂຊ້ ລັດໃສ່ຫ້ວຍງອມ ລັດຂຶ້ນໃສ່ສັນພູຜານ້ອຍ. ເສັ້ນແວງທີ 103° 33' 40", ເສັ້ນຂະໜານທີ 18° 57' 34".
- ທິດໃຕ້ ຕິດກັບ ບ້ານຫາດຢື້ນ ແລະ ບ້ານພູໂຮມໄຊ ເລີ່ມແຕ່ ສັນພູງກິນທະນີ ລັດໃສ່ຍອດຫ້ວຍກະທະ ເລາະລົງຕາມຫ້ວຍກະທະ ຮອດປາກຫ້ວຍກະທະຕົກໃສ່ນ້ຳງຽບ (ອ່າງເກັບນ້ຳ) ລັດຂຶ້ນໃສ່ສັນພູຫົວເສືອ ຮອດເຂດເຊື່ອມຕໍ່ ລະຫວ່າງ ບ້ານນາຫັນ ແລະ ບ້ານຫາດຢື້ນ. ເສັ້ນແວງທີ 103° 30' 09", ເສັ້ນຂະໜານທີ 18° 38' 07".
- ທິດຕາເວັນອອກ ຕິດກັບ ເຂດເຊື່ອມຕໍ່ ລະຫວ່າງ ບ້ານໂພນແຍງ, ບ້ານບໍ່, ບ້ານນາຫັນ ເມືອງບໍລິຄັນ ແຂວງບໍລິຄຳໄຊ ແລະ ເມືອງຮົ່ມ ແຂວງໄຊສົມບູນ. ເສັ້ນແວງທີ 103° 31' 20", ເສັ້ນຂະໜານທີ 18° 50' 59".
- ທິດຕາເວັນຕົກ ຕິດກັບ ເຂດເຊື່ອມຕໍ່ ລະຫວ່າງ ເມືອງບໍລິຄັນ ແຂວງບໍລິຄຳໄຊ ແລະ ເມືອງຮົ່ມ, ເມືອງທ່າໂທມ ແຂວງໄຊສົມບູນ. ເສັ້ນແວງທີ 103° 28' 07", ເສັ້ນຂະໜານທີ 18° 54' 09".

**ມາດຕາ 10. ການນແບ່ງເຂດຄຸ້ມຄອງ**

ການແບ່ງເຂດຄຸ້ມຄອງພື້ນທີ່ປ່າໄມ້ ແລະ ຊີວະນາໆພັນ ໃນຂອບເຂດອ່າງຮັບນ້ຳໜ້າເຂື່ອນໄຟຟ້າ ເພື່ອໃຫ້ສອດຄ່ອງຕາມ ດຳລັດ ວ່າດ້ວຍປ່າປ້ອງກັນ ດັ່ງນີ້:

1. **ເຂດຫວງຫ້າມເດັດຂາດ** ໄດ້ກຳນົດໄວ້ 2 ຈຸດ ຄື: ພູກະທະ ແລະ ພູສາມເສົ້າ (ພູສາມຫຼ່ຽມ) ທີ່ໄດ້ຈັດສັນ, ແບ່ງຂອບເຂດສະເພາະ ເພື່ອຮັກສາເຂດຕົ້ນກຳເນີດຂອງແຫຼ່ງນ້ຳ, ຮັກສາພັນພືດ, ພັນສັດນ້ຳ, ພັນສັດປ່າ. ສ່ວນຂອບເຂດພື້ນທີ່ດັ່ງກ່າວນີ້ ຕ້ອງໄດ້ກຳນົດ, ສຳຫຼວດ ແລະ ປັກຫຼັກໝາຍ ຈາກພາກສ່ວນທີ່ກ່ຽວຂ້ອງ;
2. **ເຂດຄຸ້ມຄອງນຳໃຊ້** ໄດ້ກຳນົດໄວ້ ຕາມການວາງແຜນນຳໃຊ້ທີ່ດິນ ຂອງບ້ານ ຊຶ່ງສາມາດນຳໃຊ້ປ່າໄມ້ ແລະ ຜະລິດຕະພັນປ່າໄມ້ ແບບຍືນຍົງ ຕາມປະເພນີ ໂດຍບໍ່ໃຫ້ມີຜົນກະທົບຕໍ່ໂຄງສ້າງທາງທຳມະຊາດ ຂອງປ່າໄມ້

ແລະ ຜະລິດຕະພັນປ່າໄມ້ ໃນເຂດທີ່ຈັດສັນໃຫ້ເທົ່ານັ້ນ ແຕ່ຕ້ອງໄດ້ ສຳຫຼວດ ແລະ ປັກຫຼັກໝາຍ ຄືກັນກັບ ເຂດຫວງຫ້າມເດັດຂາດ.

## ໝວດທີ 4
## ການສຶກສາຄົ້ນຄ້ວາ, ການນຳໃຊ້ເນື້ອທີ່ດິນປ່າໄມ້ ແລະ ການຄຸ້ມຄອງການປະມົງ

### ມາດຕາ 11. ການສຶກສາຄົ້ນຄວ້າ

ລັດ ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ດຳເນີນການສຶກສາ, ຄົ້ນຄວ້າ, ທົດລອງທາງດ້ານວິທະຍາສາດ ໃນຂອບເຂດພື້ນທີ່ອ່າງຮັບນ້ຳ ເພື່ອຊອກຫາຮູບແບບ ແລະ ມາດຖານເຕັກນິກວິທີການໃໝ່ ເຊັ່ນ: ການສຶກສາຮູບແບບຟື້ນຟູປ່າໄມ້, ການດູດຊັບທາດກາກບອນ ($CO_2$), ການຈັດສັນແຫຼ່ງແກ່ນພັນພືດ, ການສຶກສາຊະນິດພັນໄມ້ທຳມະຊາດ, ການຈັດສັນແຫຼ່ງນ້ຳ, ການສຶກສາກ່ຽວກັບສັດນ້ຳ-ສັດປ່າ ແລະ ອື່ນໆ ຕ້ອງໄດ້ຮັບອະນຸຍາດ ຈາກ ຄະນະກຳມະການຄຸ້ມຄອງຂັ້ນແຂວງ, ສຳລັບອົງການຈັດຕັ້ງສາກົນ ຕ້ອງໄດ້ຮັບການອະນຸຍາດ ຈາກ ລັດຖະບານ ຕາມລະບຽບຫຼັກການ.

### ມາດຕາ 12. ການນຳໃຊ້ເນື້ອທີ່ດິນປ່າໄມ້

ໃນພື້ນທີ່ບໍລິເວນອ່າງຮັບນ້ຳ ລັດ ອະນຸຍາດໃຫ້ນຳໃຊ້ສະເພາະເພື່ອການທ່ອງທ່ຽວທຳມະຊາດ, ສະຖານທີ່ພັກຜ່ອນຊົ່ວຄາວ ຕາມເຂດ ທີ່ໄດ້ຈັດສັນໄວ້ ແຕ່ຕ້ອງໄດ້ຮັບອະນຸຍາດ ຈາກ ຂະແໜງການທີ່ກ່ຽວຂ້ອງ.

### ມາດຕາ 13. ການຄຸ້ມຄອງການປະມົງ

ຄະນະຮັບຜິດຊອບຄຸ້ມຄອງການປະມົງ ຂັ້ນບ້ານ ແລະ ຂັ້ນເມືອງ ໂດຍໄດ້ຮັບການແຕ່ງຕັ້ງຈາກທ່ານເຈົ້າເມືອງ, ຈັດຕັ້ງກຸ່ມຫາປາ, ສ້າງລະບຽບການຄຸ້ມຄອງການຫາປາ ຈາກການຮັບຮອງຂັ້ນເມືອງ, ເພື່ອການຄຸ້ມຄອງການຫາປາ, ຂຶ້ນທະບຽນເຮືອຫາປາ ແລະ ເຮືອຂົນສົ່ງ ຕະຫລອດຮອດ ການກຳນົດເສັ້ນທາງເດີນເຮືອ ໃນເຂດອະນຸຍາດໃຫ້ ຫາປາ.

## ໝວດທີ 5
## ຄະນະກຳມະການຄຸ້ມຄອງ ແລະ ອົງການກວດກາ

### ມາດຕາ 14. ຄະນະກຳມະການຄຸ້ມຄອງ

ອົງການປົກຄອງແຂວງ ເປັນຜູ້ຄຸ້ມຄອງ ກ່ຽວກັບ ເຂດຄຸ້ມຄອງ, ປົກປັກຮັກສາຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ ໃນເຂດພື້ນທີ່ອ່າງຮັບນ້ຳໜ້າເຂື່ອນໄຟຟ້າ ຢ່າງລວມສູນ, ເປັນເອກະພາບ ໂດຍມອບຄວາມຮັບຜິດຊອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນໃຈກາງໃນການປະສານສົມທົບ ກັບ ພາກສ່ວນທີ່ກ່ຽວຂ້ອງ.

ຄະນະກຳມະການຄຸ້ມຄອງ ປະກອບມີ 3 ຄະນະ ດັ່ງນີ້:

1. ຄະນະກຳມະການຄຸ້ມຄອງຂັ້ນແຂວງ ໂດຍແມ່ນ ທ່ານເຈົ້າແຂວງ ເປັນຜູ້ແຕ່ງຕັ້ງ ປະກອບມີ:
   - ທ່ານ ຮອງເຈົ້າແຂວງ (ຜູ້ຊີ້ນຳວຽກງານເສດຖະກິດ) ເປັນຫົວໜ້າ
   - ທ່ານ ຫົວໜ້າ ຫລື ຮອງພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນຮອງ
   - ຮອງເຈົ້າເມືອງບໍລິຄັນ ແລະ ພະແນກການ ຂັ້ນແຂວງທີ່ກ່ຽວຂ້ອງ ເປັນຄະນະ
2. ກອງເລຂາ ໂດຍແມ່ນ ທ່ານເຈົ້າແຂວງ ເປັນຜູ້ແຕ່ງຕັ້ງ ປະກອບມີ:
   - ທ່ານ ຮອງຫົວໜ້າຂະແໜງປ່າໄມ້ແຂວງ ເປັນຫົວໜ້າ
   - ທ່ານ ວິຊາການຊຳນານງານ ຂະແໜງປ່າໄມ້ ແຂວງ ເປັນຮອງ
   - ທ່ານ ວິຊາການຂະແໜງປ່າໄມ້ແຂວງ ແລະ ພະນັກງານຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເປັນຄະນະ.
3. ຄະນະກຳມະການຄຸ້ມຄອງຂັ້ນບ້ານ ໂດຍແມ່ນ ທ່ານເຈົ້າເມືອງ ເປັນຜູ້ແຕ່ງຕັ້ງ ປະກອບມີ:
   ນາຍບ້ານ 8 ບ້ານ ອ້ອມຂ້າງອ່າງຮັບນ້ຳໜ້າເຂື່ອນໄຟຟ້າ ແລະ ຮອງນາຍບ້ານຜູ້ຮັບຜິດຊອບວຽກງານເສດຖະກິດ ຂອງບ້ານ ເປັນຄະນະ.

**ມາດຕາ 15. ສິດ ແລະ ໜ້າທີ່ ຂອງຄະນະກຳມະການຄຸ້ມຄອງຂັ້ນແຂວງ**

ຄະນະກຳມະການຄຸ້ມຄອງຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງລຸ່ມນີ້:

1. ຊີ້ນຳ ຄະນະກອງເລຂາ ໃນການເຄື່ອນໄຫວ ວຽກງານສຳຫຼວດ, ວາງແຜນຈັດສັນປ່າປ້ອງກັນຍອດນ້ຳ, ກຳນົດເຂດຟື້ນຟູປ່າໄມ້, ປູກປ່າທົດແທນ, ເຂດອະນຸລັກຊີວະນາໆພັນ ແລະ ຄຸ້ມຄອງອ່າງຮັບນ້ຳໜ້າເຂື່ອນໄຟຟ້າ ໃນຂອບເຂດ ແຂວງບໍລິຄຳໄຊ ໃຫ້ສອດຄ່ອງ ກັບ ແຜນພັດທະນາ ເສດຖະກິດ-ສັງຄົມ ຂອງແຂວງບໍລິຄຳໄຊ ແຕ່ລະໄລຍະ;
2. ຊີ້ນຳການສ້າງໂຄງການ, ແຜນການປະຈຳປີ, ຈັດວາງບຸກຄະລາກອນ, ຈັດສັນງົບປະມານ ແລະ ຮັບຮອງເອົາແຜນການເຄື່ອນໄຫວການຄຸ້ມຄອງ, ປົກປັກຮັກສາ ຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ ໃນເຂດອ່າງຮັບນ້ຳ;
3. ຈັດກອງປະຊຸມຢ່າງໜ້ອຍປີລະໜຶ່ງຄັ້ງ ເພື່ອຮັບຟັງການສະຫຼຸບລາຍງານ ຜົນການຈັດຕັ້ງປະຕິບັດວຽກງານ ຂອງໂຄງການ; ກໍລະນີເກີດມີບັນຫາສຸດວິໄສ ກໍສາມາດຈັດກອງປະຊຸມວິສາມັນ ຂຶ້ນໄດ້.
4. ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານ ການຄຸ້ມຄອງ, ປົກປັກຮັກສາ ຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ ໃນເຂດອ່າງຮັບນ້ຳ;
5. ຕິດຕາມການຈັດຕັ້ງປະຕິບັດສັນຍາ ລະຫວ່າງ ລັດຖະບານລາວ ແລະ ບໍລິສັດ ຫລື ຜູ້ພັດທະນາ ໂຄງການ ທີ່ໄດ້ລົງລາຍເຊັນຮ່ວມກັນ;
6. ແຕ່ງຕັ້ງຄະນະກອງເລຂາ, ຄະນະກຳມະການຄຸ້ມຄອງຂັ້ນບ້ານ ແລະ ຄະນະທີມງານສະເພາະກິດລົງຊຸກຍູ້, ຕິດຕາມ ແລະ ກວດກາ ການປະຕິບັດ ກິດຈະກຳພາກສະໜາມ ຂອງ ໂຄງການ;
7. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງຂັ້ນເທິງ.

**ມາດຕາ 16. ສິດ ແລະ ໜ້າທີ່ ຂອງກອງເລຂາ**

ກອງເລຂາ ມີສິດ ແລະ ໜ້າທີ່ ດັ່ງລຸ່ມນີ້:

1. ເປັນເສນາທິການໃຫ້ແກ່ ຄະນະກຳມະການຄຸ້ມຄອງຂັ້ນແຂວງ ໃນການຄຸ້ມຄອງ, ປົກປັກຮັກສາຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ ໃນເຂດອ່າງຮັບນ້ຳ;
2. ເປັນເຈົ້າການປະສານສົມທົບ ກັບ ພາກສ່ວນທີ່ກ່ຽວຂ້ອງ ລົງສຳຫຼວດຂອບເຂດ ໂຄງການ, ເກັບກຳຂໍ້ມູນກ່ຽວກັບປ່າໄມ້, ຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ;
3. ປະສານງານ, ປຶກສາຫາລື ແລະ ວາງແຜນຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອວາງແຜນຄຸ້ມຄອງ ແລະ ແຜນດຳເນີນງານຕ່າງໆ ເປັນຕົ້ນແມ່ນ ການຟື້ນຟູປ່າໄມ້, ການຄຸ້ມຄອງ, ປົກປັກຮັກສາຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ ໃຫ້ສອດຄ່ອງ ກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ເປັນແຕ່ລະໄລຍະ;
4. ກະກຽມ ແລະ ດຳເນີນກອງປະຊຸມວິຊາການ, ນຳສະເໜີແຜນການປະຈຳປີ ໃຫ້ແກ່ຄະນະກຳມະການຄຸ້ມຄອງຂັ້ນແຂວງ ຄົ້ນຄ້ວາ ພິຈາລະ ນາຮັບຮອງ;
5. ນຳສະເໜີປັບປຸງແຜນການຄຸ້ມຄອງ ແລະ ການດຳເນີນງານໃຫ້ເຂົ້າກັບສະພາບການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ ເປັນແຕ່ລະໄລຍະ;
6. ຊີ້ນຳ - ນຳພາ ການຈັດຕັ້ງປະຕິບັດວຽກພາກສະໜາມ, ປະສານງານ ກັບ ທຸກພາກສ່ວນທີ່ກ່ຽວຂ້ອງໃນການເຄື່ອນໄຫວວຽກງານ, ຈັດສັນງົບປະມານ ເຂົ້າໃນວຽກງານຄຸ້ມຄອງໂຄງການ;
7. ສະຫຼຸບການໃຊ້ຈ່າຍ, ລົງເລີກບັນຊີ-ການເງິນ, ຄຸ້ມຄອງພາຫະນະ ແລະ ອຸປະກອນ ຂອງໂຄງການ ພ້ອມທັງລາຍງານໃຫ້ ຄະນະກຳມະການຄຸ້ມຄອງຂັ້ນແຂວງ ເປັນແຕ່ລະໄລຍະ;
8. ຊຸກຍູ້ ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງໂຄງການອ່າງຮັບນ້ຳ ໜ້າເຂື່ອນໄຟຟ້າ ໃນຂອບເຂດ ແຂວງບໍລິຄຳໄຊ;
9. ສ້າງລະບຽບການ, ບົດແນະນຳ, ປຶ້ມຄູ່ມື ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາຊັບ ພະຍາກອນປ່າໄມ້ ແລະ ຊີວະນາໆພັນ ໃນເຂດອ່າງຮັບນ້ຳ ໜ້າເຂື່ອນໄຟຟ້າ;
10. ມີໜ້າທີ່ຮັບຜິດຊອບວຽກງານ ເຜີຍແຜ່ລະບຽບກົດໝາຍ, ນິຕິກຳລຸ່ມກົດໝາຍ, ວຽກງານປູກຈິດສຳນຶກ ດ້ານວຽກງານອະນຸລັກ, ປົກປັກຮັກສາ ຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ ໃຫ້ປະຊາຊົນ ມີຄວາມຮັບຮູ້ ແລະ ເຂົ້າໃຈຢ່າງຈະແຈ້ງຕໍ່ກັບລະບຽບການ ເພື່ອປ້ອງກັນຜົນກະທົບທີ່ອາດຈະເກີດຂຶ້ນ ໃນຂອບເຂດພື້ນທີ່ອ່າງຮັບນ້ຳ;
11. ກວດກາບົດສະເໜີໂຄງການພັດທະນາຕ່າງໆ ທີ່ກ່ຽວຂ້ອງກັບ ພື້ນທີ່ອ່າງຮັບນ້ຳ ແລະ ປະກອບຄຳຄິດຄຳເຫັນດ້ານວິຊາການ ໃຫ້ແກ່ ຄະນະກຳມະການຄຸ້ມຄອງຂັ້ນແຂວງ ໃນການອະນຸມັດໂຄງການ ຫລື ຍົກເລີກ;
12. ສະຫຼຸບ, ລາຍງານ ການປະຕິບັດວຽກງານການຄຸ້ມຄອງອ່າງຮັບນ້ຳ ໃຫ້ແກ່ຄະນະກຳມະການຄຸ້ມຄອງຂັ້ນແຂວງ ເປັນປົກກະຕິ;
13. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງຂັ້ນເທິງ.

**ມາດຕາ 17. ສິດ ແລະ ໜ້າທີ່ ຂອງຄະນະກຳມະການຄຸ້ມຄອງຂັ້ນບ້ານ.**

1. ເປັນເສນາທິການໂດຍກົງໃຫ້ແກ່ ອົງການປົກຄອງເມືອງ, ຄະນະກອງເລຂາ ໃນການຄຸ້ມຄອງ, ຕິດຕາມ, ກວດກາການເຄື່ອນໄຫວ ຂອງປະຊາຊົນ ພາຍໃນເຂດອ່າງຮັບນ້ຳ;

2. ເຜີຍແຜ່ຂະຫຍາຍລະບຽບ, ນິຕິກຳລຸ່ມກົດໝາຍ ແລະ ກົດໝາຍ ຕ່າງໆ ທີ່ກ່ຽວຂ້ອງກັບການຄຸ້ມຄອງອ່າງຮັບນ້ຳ ໃຫ້ແກ່ປະຊາຊົນ ຮັບຮູ້ຢ່າງກ້ວາງຂວາງ ແລະ ຈັດຕັ້ງປະຕິບັດລະບຽບການຄຸ້ມຄອງ, ປົກປັກຮັກສາຊັບພະຍາກອນປ່າໄມ້ ໃຫ້ໄດ້ຮັບຜົນດີ;
3. ສະກັດກັ້ນປະກົດການຫຍໍ້ທໍ້ຕ່າງໆ ທີ່ຈະເກີດຂຶ້ນ ເປັນຕົ້ນແມ່ນ ການເຂົ້າ-ອອກ ຂອງບຸກຄົນພາຍໃນ ແລະ ພາຍນອກ, ການບຸກລຸກພື້ນທີ່ປ່າໄມ້, ການຈູດປ່າຊະຊາຍ, ການລ່າສັດນ້ຳ-ສັດປ່າ ແລະ ອື່ນໆ ໃນຂອບເຂດຄວາມຮັບຜິດຊອບຂອງບ້ານ;
4. ປະສານສົມທົບເຈົ້າໜ້າທີ່ກ່ຽວຂ້ອງ ກັກຕົວຜູ້ກະທຳຜິດ ຕໍ່ລະບຽບ ແລະ ກົດໝາຍ ໃນເຂດອ່າງຮັບນ້ຳ, ຖ້າເປັນການກະທຳຜິດທີ່ຮ້າຍແຮງ ໃຫ້ສົມທົບ ກັບ ທີມກວດກາລາດຕະເວນ ປະກອບຫຼັກຖານທີ່ກະທຳຜິດ ສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງຂັ້ນເມືອງ ຫລື ແຂວງ ດຳເນີນຄະດີ ຕາມລະບຽບກົດໝາຍ ຂອງ ສປປ ລາວ;
5. ປະກອບສ່ວນໃນການປົກປັກຮັກສາ, ການສຳຫຼວດ ສັດນ້ຳ-ສັດປ່າ ແລະ ຟື້ນຟູປ່າໄມ້ ໃນຂອບເຂດບ້ານຂອງຕົນ;
6. ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມດ້ານວິຊາການ ຕາມການເຊີນ ຂອງ ຄະນະກຳມະການຄຸ້ມຄອງຂັ້ນແຂວງ ແລະ ມີສິດປະກອບຄຳຄິດເຫັນ ໃນກອງປະຊຸມ.
7. ສະຫຼຸບ ລາຍງານ ການປະຕິບັດວຽກງານໃຫ້ ຄະນະກອງເລຂາ ແລະ ອົງການປົກຄອງເມືອງ ຢ່າງເປັນປົກກະຕິ;
8. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງຂັ້ນເທິງ.

**ມາດຕາ 18. ອົງການກວດກາ**

ກວດກາຕິດຕາມການເຄື່ອນໄຫວຊຸກຍູ້ ການຄຸ້ມຄອງ, ປົກປັກຮັກສາຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ ຂອງ ອົງການຈັດຕັ້ງ, ພະນັກງານ, ເຈົ້າໜ້າທີ່ ແລະ ປະຊາຊົນ ເພື່ອໃຫ້ສອດຄ່ອງຕາມແຜນຄຸ້ມຄອງອ່າງຮັບນ້ຳ ແລະ ລະບຽບກົດໝາຍ ແນໃສ່ການຄຸ້ມຄອງອ່າງຮັບນ້ຳ ໃຫ້ມີຄວາມຍືນຍົງ.

ອົງການກວດກາ ປະກອບມີ 2 ພາກສ່ວນ ຄື:

1. ອົງການກວດກາພາຍໃນ ປະກອບມີ: ຄະນະກຳມະການຄຸ້ມຄອງຂັ້ນແຂວງ, ພະແນກການທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ, ຂັ້ນບ້ານ;
2. ອົງການກວດກາພາຍນອກ ປະກອບມີ: ອົງການຈັດຕັ້ງມະຫາຊົນ, ສະພາປະຊາຊົນແຂວງ, ອົງການກວດກາລັດແຂວງ ຕະຫຼອດຮອດປະຊາຊົນ.

**ມາດຕາ 19. ເນື້ອໃນກວດກາ**

ກວດກາການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງອ່າງຮັບນ້ຳໜ້າເຂື່ອນໄຟຟ້າ ຂອງ ຄະນະກຳມະການຄຸ້ມຄອງຂັ້ນແຂວງ, ຄະນະກອງເລຂາ, ຄະນະ ກຳມະການຄຸ້ມຄອງຂັ້ນບ້ານ.

ກວດກາການການໃຊ້ຈ່າຍງົບປະມານ ຂອງໂຄງການ.

**ມາດຕາ 20. ຮູບການກວດກາ**

ຮູບການກວດກາ ມີ 3 ຮູບການ ຄື:

1. ກວດກາຕາມລະບົບປົກກະຕິ: ກວດກາຕາມແຜນການປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

2. ກວດກາແບບແຈ້ງໃຫ້ຊາບລ່ວງໜ້າ: ກວດການອກແຜນ ເມື່ອເຫັນວ່າມີຄວາມຈໍາເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຊາບກ່ອນລ່ວງໜ້າ;
3. ກວດກາແບບກະທັນຫັນ: ກວດກາແບບຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຊາບລ່ວງໜ້າ.

## ໝວດທີ 6
## ງົບປະມານ

**ມາດຕາ 21. ງົບປະມານ**

ງົບປະມານທີ່ນໍາໃຊ້ເຂົ້າໃນການຄຸ້ມຄອງອ່າງ, ປົກປັກຮັກສາຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ ໃນເຂດອ່າງຮັບນໍ້າໜ້າເຂື່ອນໄຟຟ້າ ພາຍໃຕ້ສັນຍາສໍາປະທານ ລະຫວ່າງ ລັດຖະບານ ສປປ ລາວ ແລະ ບໍລິສັດໄຟຟ້າ ນໍ້າງຽບ 1 ຈໍາກັດ ສະບັບລົງວັນທີ 23 ສິງຫາ 2013.

**ມາດຕາ 22. ການນໍາໃຊ້ງົບປະມານ**

ງົບປະມານທີ່ຈັດສັນໄວ້ ໃນແຜນຄຸ້ມຄອງອ່າງຮັບນໍ້າ ແລະ ອ່າງເກັບນໍ້າເຂື່ອນໄຟຟ້ານໍ້າງຽບ 1 ມີເປົ້າໝາຍນໍາໃຊ້ເຂົ້າໃນການຄຸ້ມຄອງ, ປົກປັກຮັກສາຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ ໃນເຂດອ່າງຮັບນໍ້າໜ້າເຂື່ອນໄຟຟ້າ ຊຶ່ງການນໍາໃຊ້ງົບປະມານດັ່ງກ່າວ ຕ້ອງປະຕິບັດຕາມ ຂໍ້ຕົກລົງ ຂອງກະຊວງການເງິນ ສະບັບເລກທີ 4000/ກງ, ສະບັບລົງວັນທີ 12 ທັນວາ 2018. ວ່າດ້ວຍ ກໍານົດໝາຍການໃຊ້ຈ່າຍງົບປະມານ ຂອງລັດ ຢ່າງເຂັ້ມງວດ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 23. ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຂອງ ລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ມີພຶດຕິກໍາ ດັ່ງນີ້:

1. ຫ້າມບຸກຄົນ, ນິຕິບຸກຄົນ ການຈັດຕັ້ງລັດ, ເອກະຊົນ ເຂົ້າໄປບຸກລຸກ, ຈັບຈອງ, ພັດທະນາ ຫຼື ຊື້-ຂາຍ ດິນ ແລະ ການໄປນໍາໃຊ້ພືດ, ຕົ້ນໄມ້, ຜົນລະປູກ ໃນຂອບເຂດພື້ນທີ່ອ່າງຮັບນໍ້າ ຂອງໂຄງການ;
2. ຫ້າມຍ້າຍ, ປ່ຽນແປງ ຫຼື ທໍາລາຍປ້າຍ, ຫຼັກໝາຍ, ເຄື່ອງໝາຍເຂດແດນ ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງນໍາໃຊ້, ເຂດວັງສະຫງວນປາ ແລະ ເຂດຄຸ້ມຄອງອ່າງຮັບນໍ້າ ໜ້າເຂື່ອນໄຟຟ້າ;
3. ຫ້າມດໍາເນີນກິດຈະການປ່າໄມ້, ການຂຸດຄົ້ນຊັບພະຍາກອນເທິງໜ້າດິນ, ໃຕ້ດິນ ເຊັ່ນ: ຂຸດຄົ້ນໄມ້, ເຄື່ອງປ່າຂອງດົງ, ແຮ່ທາດ, ລ່າສັດນໍ້າ-ສັດປ່າ ລວມທັງການເຂົ້າໄປໃນເຂດຫວງຫ້າມເດັດຂາດ ເວັ້ນເສຍແຕ່ກໍລະນີໄດ້ຮັບອະນຸຍາດ ທີ່ຖືກຕ້ອງຕາມລະບຽບ ກົດໝາຍ ແລະ ນິຕິກໍາລຸ່ມກົດໝາຍ;
4. ຫ້າມໃຊ້ເຄື່ອງມືລ່າ ສັດນໍ້າ-ສັດປ່າ ໃນລັກສະນະດັບສູນ ໃນເຂດອ່າງຮັບນໍ້າ;

5. ຫ້າມຈັບຈອງ ຫຼື ຄອບຄອງນຳໃຊ້, ເກາະດອນ, ດິນບໍລິເວນນ້ຳທຳມະຊາດ ແລະ ຫ້ວຍນ້ຳຕ່າງໆ ທີ່ເປັນສາຂາ ທີ່ໄຫຼລົງສູ່ ຂອບເຂດອ່າງເກັບນ້ຳ, ວັງສະຫງວນຕາມສາຍນ້ຳ, ທຳລາຍແຫລ່ງນ້ຳ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
6. ຫ້າມກໍ່ສ້າງ, ຂຸດ, ເຈາະ, ດູດຫີນ, ດູດຊາຍ, ປ່ອຍນ້ຳເປື້ອນ, ສານເຄມີທີ່ເປັນພິດ, ຖິ້ມລະເບີດ, ຖິ້ມສິ່ງເສດເຫຼືອ ແລະ ຖິ້ມຂີ້ເຫຍື້ອໃສ່ແຄມນ້ຳ, ສາຍນ້ຳ, ຫ້ວຍ, ໜອງ, ບຶງ ແລະ ດິນບໍລິເວນນ້ຳ ຊຶ່ງເປັນສາເຫດພາໃຫ້ນ້ຳເປື້ອນ, ຕື້ນເຂີນ, ບົກແຫ້ງ ແລະ ເນົ່າເໝັນເປັນພິດ ຕະຫຼອດຮອດການດູດປັບໜ້າດິນຖົມແຫຼ່ງນ້ຳທຳມະຊາດ ແລະ ການເຮັດໃຫ້ເກີດການເຊາະເຈື່ອນຂອງດິນ ໃນເຂດອ່າງຮັບນ້ຳໜ້າເຂື່ອນ.

**ມາດຕາ 24. ຂໍ້ຫ້າມສຳລັບ ພະນັກງານໃນຄະນະກຳມະການຄຸ້ມຄອງຂັ້ນແຂວງ, ຂັ້ນເມືອງ, ຂັ້ນບ້ານ ແລະ ເຈົ້າໜ້າທີ່**

ຫ້າມ ມີພຶດຕິກຳ ດັ່ງນີ້:

1. ຫ້າມສວຍໃຊ້ໜ້າທີ່ຕຳແໜ່ງຮຽກຮ້ອງຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ ແລະ ພັກພວກ;
2. ຫ້າມໃຊ້ສິດໜ້າທີ່ເກີນຂອບເຂດຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດ ຂອງລັດ ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດ ຂອງປະຊາຊົນ;
3. ຫ້າມເມີນເສີຍປະລະໜ້າທີ່ ແລະ ຄວາມຮັບຜິດຊອບຕໍ່ວຽກງານຄຸ້ມຄອງ, ປົກປັກຮັກສາຊັບພະຍາກອນປ່າໄມ້, ສັດປ່າ ແລະ ຊີວະນາໆພັນ ໃນເຂດອ່າງຮັບນ້ຳ ທີ່ການຈັດຕັ້ງມອບໝາຍໃຫ້;
4. ຫ້າມຍ້າຍ, ປ່ຽນແປງ ຫຼື ທຳລາຍເຄື່ອງໝາຍເຂດແດນ ຂອງ ເຂດຄຸ້ມຄອງ, ປົກປັກຮັກສາຊັບພະຍາກອນປ່າໄມ້, ສັດປ່າ ແລະ ຊີວະນາໆພັນ ໃນເຂດອ່າງຮັບນ້ຳໜ້າເຂື່ອນໄຟຟ້າ ນ້ຳງຽບ 1;
5. ຫ້າມໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ແລະ ນຳໃຊ້ມາດຕະການອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ເພື່ອຜົນປະໂຫຍດສ່ວນຕົວ;
6. ຫ້າມມີໄວ້ໃນຄອບຄອງເຄື່ອງຈັກ, ອຸປະກອນສຳລັບຂຸດຄົ້ນໄມ້, ພາຫະນະລາກແກ່ໄມ້ ແລະ ອາວຸດລ່າສັດນ້ຳ-ສັດປ່າ ທຸກຊະນິດ ຫຼື ມີພຶດຕິກຳອື່ນໆ ທີ່ເປັນການລະເມີດລະບຽບ ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ.

## ໝວດທີ 8
## ນະໂຍບາຍ ຕໍ່ ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 25. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ລັດວິສາຫະກິດ, ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນເຄື່ອນໄຫວຄຸ້ມຄອງ, ປົກປັກຮັກສາ ຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ ໃນເຂດອ່າງຮັບນ້ຳ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆ ຕາມລະບຽບການ.

**ມາດຕາ 26. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ລັດວິສາຫະກິດ, ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ລະເມີດຂໍ້ຕົກລົງ ສະບັບນີ້ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ຖືກປັບໃໝ ແລະ ລົງໂທດຕາມລະບຽບກົດໝາຍ ສະຖານໜັກ ຫຼື ເບົາ.

**ມາດຕາ 27. ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ລັດວິສາຫະກິດ, ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ລະເມີດຂໍ້ຕົກລົງ ສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ທີ່ມີລັກສະນະເບົາ ຊຶ່ງບໍ່ເປັນການກະທຳຜິດທາງກົດໝາຍອາຍາ ແລະ ກໍ່ຄວາມເສຍຫາຍ ບໍ່ຫຼວງຫຼາຍ ແຕ່ຫາກມີຄວາມຈິງໃຈລາຍງານ, ຮັບສາລະພາບຕໍ່ການກະທຳຜິດຂອງຕົນ ແລະ ສົ່ງ ຊັບສິນ ຫຼື ຂອງກາງ ທີ່ໄດ້ມາໂດຍບໍ່ຖືກຕ້ອງນັ້ນຄືນຄົບຖ້ວນ ກໍ່ຈະຖືກຕັກເຕືອນ ແລະ ສຶກສາອົບຮົມ.

**ມາດຕາ 28. ມາດຕະການທາງວິໄນ**

ພະນັກງານ ແລະ ເຈົ້າໜ້າທີ່ ທີ່ໄດ້ລະເມີດຕໍ່ ຂໍ້ຫ້າມ ໃນຂໍ້ຕົກລົງສະບັບນີ້ ເປັນຕົ້ນ ຂໍ້ຫ້າມ, ຂາດຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ ທີ່ຕົນໄດ້ຮັບມອບໝາຍ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງໂທດທາງວິໄນ ຕາມກົດໝາຍວ່າດ້ວຍ ພະນັກງານ-ລັດຖະກອນ. ຜູ້ຖືກລົງວິໄນ ຕ້ອງສົ່ງຊັບສິນທີ່ຕົນໄດ້ມາໂດຍບໍ່ຖືກຕ້ອງນັ້ນ ຄືນໃຫ້ການຈັດຕັ້ງ ໃຫ້ຄົບຖ້ວນ.

**ມາດຕາ 29. ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ລັດວິສາຫະກິດ, ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ລະເມີດຂໍ້ຕົກລົງ ສະບັບນີ້ ເປັນຕົ້ນຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ ຊຶ່ງໄດ້ຜ່ານການກ່າວເຕືອນ ຫຼື ສຶກສາອົບຮົມແລ້ວ ຈະຖືກປັບໃໝສາມເທົ່າ ຂອງມູນຄ່າຄວາມເສຍຫາຍ ຂອງ ຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ ຕາມລາຄາຕະຫລາດ.

**ມາດຕາ 30. ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ລັດວິສາຫະກິດ, ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດ ຂອງລັດ, ຄອບຄົວ ແລະ ບຸກຄົນອື່ນ ຕ້ອງໄດ້ໃຊ້ແທນຄ່າເສຍຫາຍ ຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 31. ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ລັດວິສາຫະກິດ, ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ເປັນຕົ້ນການລັກລອບຕັດໄມ້, ຖາງປ່າ, ການຊື້-ຂາຍ, ການເຄື່ອນຍ້າຍໄມ້ທຳມະຊາດ, ເຄື່ອງປ່າຂອງດົງ, ສັດນ້ຳ-ສັດປ່າ, ຊາກສັດນ້ຳ-ສັດປ່າ, ກົດໜ່ວງຖ່ວງດຶງການດຳເນີນຄະດີກ່ຽວກັບປ່າໄມ້, ທີ່ດິນປ່າໄມ້, ອະນຸຍາດການຫັນປ່ຽນປ່າທຳມະຊາດ, ຊຸດຄົ້ນ ຫຼື ອອກອະນຸຍາດຕັດໄມ້, ບຸກລຸກ, ຈັບຈອງ, ຊື້ຂາຍ ທີ່ດິນປ່າໄມ້ ແລະ ການກະທຳອື່ນ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກກັກຕົວຊົ່ວຄາວ, ດຳເນີນຄະດີ ແລະ ລົງໂທດຕາມກົດໝາຍ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 32. ການຈັດຕັ້ງປະຕິບັດ**

ມອບໃຫ້ ຄະນະກຳມະການຄຸ້ມຄອງຂັ້ນແຂວງ, ກອງເລຂາ, ຄະນະກຳມະການຄຸ້ມຄອງຂັ້ນບ້ານ, ທຸກການຈັດຕັ້ງທີ່ກ່ຽວຂ້ອງ ແລະ ປະຊາຊົນບັນດາເຜົ່າ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 33. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນເຈົ້າແຂວງ ລົງລາຍເຊັນເປັນຕົ້ນໄປ ແລະ ໄດ້ລົງຈົດໝາຍເຫດ ທາງລັດຖະການ ພາຍໃນ 15 ວັນ.

ເຈົ້າແຂວງບໍລິຄຳໄຊ

ແຂວງບໍລິຄຳໄຊ
ເຈົ້າແຂວງ

ປອ. ກອງແກ້ວ ໄຊສົງຄາມ